ຝຶກອົບຮົມແບບໃກ້ຊິດ ຫົວຂໍ້ ສິດຂອງປະຊາຊົນລາວໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຕາມປະເພນີ ແລະ ການແກ້ໄຂຂໍ້ຂັດແຍ່ງ

ທ່ານຈະໄດ້ຮຽນຮູ້ຫຍັງແດ່?

- ຄວາມຮູ້ເບື້ອງຕົ້ນກ່ຽວກັບສິດທີ່ດິນຕາມປະເພນີ ແລະ ຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນກ່ຽວກັບການນຳໃຊ້ ອີງຕາມກົດໝາຍຂອງ ສປປ ລາວ;
- ຮຽນຮູ້ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ກົດໝາຍຂອງ ສປປ ລາວ;
- ຮຽນຮູ້ກ່ຽວກັບການສ້າງຄວາມສາມາດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງໃນຂັ້ນຊຸມຊົນ.

ອາລະຝຶກອົບຮົມມີຫຍັງແດ່?

ຝຶກອົບຮົມແບບໃກ້ຊິດ ໃຊ້ເວລາ 5 ວັນ:

- 2 ວັນ ສຳລັບຝຶກອົບຮົມດ້ານທິດສະດີ;
- 1 ວັນ ສຳລັບຜູ້ເຂົ້າຮ່ວມກະກຽມ, ຝຶກຊ້ອມ;
- 1 ວັນ ສຳລັບຄູຝຶກ ແລະ ຜູ້ເຂົ້າຮ່ວມ ອາງແຜນຮ່ວມກັນ ກ່ອນລົງໄປບ້ານເປົ້າໝາຍ ເພື່ອທົດລອງຝຶກອົບຮົມ;
- 1 ວັນ ສຳລັບ ຈັດຝຶກອົບຮົມໃນບ້ານເປົ້າໝາຍ ແລະ ປະເມີນຜົນຮ່ວມກັນ.

ວິທີການດຳເນີນງານມີແນວໃດແດ່?

- ເຕັກນິກວິທີການຮຽນຮູ້ຢ່າງມີສ່ວນຮ່ວມ ແລະ ມີປະຕິກິລິຍາໂຕ້ຕອບ;
- ການຝຶກອົບຮົມ ແມ່ນດຳເນີນໂດຍຄູຝຶກຫຼັກທີ່ໄດ້ຮັບການອົບຮົມ ແລະ ມີປະສົບການ;
- ທົດລອງ ຫຼື ສາທິດການຝຶກຢູ່ບ້ານ, ເກັບກຳເອົາຄຳຄິດເຫັນຕິຊົມ ແລະ ອາງແຜນ;
- ເຄື່ອງມື ປະກອບດ້ວຍແຜນບົດສອນ ແລະ ອຸປະກອນ.

ເນື້ອໃນຂອງຫຼັກສູດມີຫຍັງແດ່?

- ນຳສະເໜີ ມາດຕາ 42, ວັກທີ 1, ກົດໝາຍປ່າໄມ້ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ນຳສະເໜີ ມາດຕາ 3 ຂອງດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນ ເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008 ແລະ ມາດຕາ 53 ຂອງກົດໝາຍວ່າດ້ວຍທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;
- ສະເໜີພາບລວມຂອງ ມາດຕາ 26 ສິດໃຊ້ທີ່ດິນຕາມປະເພນີ, ດຳລັດ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນ ເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008;
- ຂະບວນການແກ້ໄຂຂໍ້ຂັດແຍ່ງ ມາດຕາ 80, 81, 83 ແລະ 84 ຂອງ ກົດໝາຍວ່າດ້ວຍທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003.

ສະເໜີຂໍຮັບການຝຶກອົບຮົມແບບໃກ້ຊິດໄດ້ແນວໃດ?

ກ່ອນຝຶກອົບຮົມແບບໃກ້ຊິດ:

- **4 ອາທິດລ່ວງໜ້າ:** ທ່ານຕ້ອງສົ່ງໜັງສືສະເໜີ ເພື່ອເຊີນໃຫ້ໂຄງການໄລຟ໌ ໄປຈັດຝຶກອົບຮົມແບບໃກ້ຊິດໃຫ້ແກ່ອົງກອນຂອງທ່ານ ແລະ ຄູ່ຮ່ວມງານທ້ອງຖິ່ນ;
- **3 ອາທິດລ່ວງໜ້າ:** ສົ່ງແຜນບົດຮຽນ ໃຫ້ແກ່ຄູ່ຮ່ວມງານພາກລັດ ແລະ ແບ່ງປັນຄຳຄິດເຫັນທີ່ມີ ຈາກອົງກອນຂອງທ່ານຫຼືຈາກຄູ່ຮ່ວມງານທ້ອງຖິ່ນໃຫ້ແກ່ໂຄງການໄລຟ໌;
- **2 ອາທິດລ່ວງໜ້າ:** ສົ່ງລາຍຊື່ບ້ານເພື່ອເຮັດຝຶກອົບຮົມທົດລອງ, ສະຖານທີ່, ໄລຍະທາງ, ລວມທັງເຜົ່າ ແລະ ກຳນົດລະອຽດວ່າ ຈຳເປັນຕ້ອງມີລ່າມແປພາສາ ຫຼື ບໍ່;
- **1 ອາທິດລ່ວງໜ້າ:** ແຈ້ງໃຫ້ໂຄງການໄລຟ໌ຮູ້ ກ່ຽວກັບຈຳນວນຂອງບ້ານທີ່ອົງກອນຂອງທ່ານ ອາງແຜນຈະຈັດຝຶກອົບຮົມ ພາຍຫຼັງຝຶກອົບຮົມຈາກໂຄງການໄລຟ໌.

ພາຍຫຼັງຝຶກອົບຮົມແບບໃກ້ຊິດ:

ແຈ້ງ ແລະ ລາຍງານໃຫ້ໂຄງການໄລຟ໌ຮັບຮູ້ກ່ຽວກັບການຝຶກອົບຮົມຂັ້ນຊຸມຊົນຂອງໜ່ວຍງານທ່ານ: ຊື່ບ້ານ, ເມືອງ, ຈຳນວນຂອງຜູ້ເຂົ້າຮ່ວມທັງໝົດ, ຈຳນວນຜູ້ເຂົ້າຮ່ວມທີ່ເປັນເພດຍິງ-ຊາຍ ແລະ ຊົນເຜົ່າ.

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
Village Focus International
MRLG Mekong Region Land Governance
DALaM
ສະຫະພາບເອີຣົບ European Union

ຕູ້ໄປສະນີ 4697, ບ້ານ ໂພນສະຫວັນໃຕ້, ໜ່ວຍ 14,
ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫວງວຽງຈັນ
ທ້ອງການ ໂທ: +856 21 312 519
ແຟັກ: +856 21 315 841
ອີເມວ: lifeproject@villagefocus.org